ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ 2598/ກຕສ
ນະຄອນຫຼວງວຽງຈັນ, ວັນທີ 12 July 2022

ຂໍ້ຕົກລົງ
ວ່າດ້ວຍ ການສ້າງ ແລະ ພັດທະນາແອັບພິເຄຊັ່ນໃຫ້ມີຄວາມປອດໄພ

- ອີງຕາມ ກົດໝາຍວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ສະບັບເລກທີ 25/ສພຊ, ລົງວັນທີ 12 ພຶດສະພາ 2017;
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານ ຜ່ານອິນເຕີເນັດ, ສະບັບເລກທີ 327/ລບ, ລົງວັນທີ 16 ກັນຍາ 2014;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສະບັບ ເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຄວາມປອດໄພໄຊເບີ ສະບັບເລກທີ 351/ກຄຊ, ລົງວັນທີ 8 ສິງຫາ 2022.

ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບ ການຕິດຕາມ ກວດກາ ແລະ ການປະເມີນຄວາມສ່ຽງຂອງການສ້າງ ແລະ ພັດທະນາແອັບພິເຄຊັ່ນ ເພື່ອແນໃສ່ຊຸກຍູ້ສົ່ງເສີມການພັດທະນານຳໃຊ້ ແອັບພິເຄຊັ່ນໃຫ້ມີຄວາມປອດໄພ, ມີປະສິດທິພາບ ແລະ ມີຄວາມສະດວກວ່ອງໄວໃນການເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ແກ່ສັງຄົມ.

ມາດຕາ 2 ການສ້າງ ແລະ ພັດທະນາແອັບພິເຄຊັ່ນໃຫ້ມີຄວາມປອດໄພ

ການສ້າງ ແລະ ພັດທະນາແອັບພິເຄຊັ່ນໃຫ້ມີຄວາມປອດໄພ ແມ່ນ ຂະບວນການໜຶ່ງໃນການພັດທະນາ ແລະ ກວດກາໜ້າທີ່ການເຮັດວຽກຂອງແອັບພິເຄຊັ່ນ ເພື່ອໃຫ້ມີຄວາມປອດໄພຫຼາຍຂຶ້ນ ໂດຍກວມເອົາມາດຕະການ ທີ່ດຳເນີນການດ້ານເຕັກນິກວິທີການກຳຄືການປະເມີນຄວາມສ່ຽງ, ການລະບຸຊ່ອງໂຫວ່, ວິທີການປ້ອງກັນ ແລະ ການ ບຳລຸງຮັກສາລະບົບ.

ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ແອັບພິເຄຊັ່ນ (Application)** ໝາຍເຖິງ ໂປຣແກຣມປະຍຸກ ຫຼື ກຸ່ມໂປຣແກຣມ ທີ່ອຳນວຍຄວາມສະດວກໃນດ້ານຕ່າງໆ ໂດຍອອກແບບມາເພື່ອຈຸດປະສົງສະເພາະສຳລັບຜູ້ໃຊ້ງານໂດຍກົງ;

2. **ຜູ້ໃຫ້ບໍລິການ** ໝາຍເຖິງ ຜູ້ສະໜອງບໍລິການຮັບຝາກຂໍ້ມູນແອັບພິເຄຊັ່ນ ຫຼື ໃຫ້ບໍລິການແອັບພິເຄຊັ່ນ;

3. **ຜູ້ໃຊ້ບໍລິການ** ໝາຍເຖິງ ຜູ້ສ້າງ ແລະ ພັດທະນາ ຫຼື ເຈົ້າຂອງແອັບພິເຄຊັ່ນ;

4. **ເບື້ອງຫຼັງ (Background)** ໝາຍເຖິງ ການເຮັດວຽກຂອງແອັບພິເຄຊັ່ນໃດໜຶ່ງຢູ່ເບື້ອງຫຼັງ ໂດຍປະຕິບັດການຄວບຄຸ່ໄປກັບການໃຫ້ບໍລິການຫຼັກຂອງລະບົບ ເປັນຕົ້ນ ຄອມພິວເຕີ ຫຼື ສະມາດໂຟນ;

5. **ເອສດີເຄ Software Development Kit (SDK)** ໝາຍເຖິງ ເຄື່ອງມືທີ່ນຳໃຊ້ສຳລັບພັດທະນາ ໂປຣແກຣມ ຫຼື ແອັບພິເຄຊັ່ນ;

6. **ເອພີໄອ Application Programming Interface (API)** ໝາຍເຖິງ ຊ່ອງທາງການເຊື່ອມຕໍ່ທີ່ຈະເຊື່ອມຕໍ່ກັບເວັບໄຊຜູ້ໃຫ້ບໍລິການ API ຈາກບ່ອນອື່ນ ເປັນຕົວກາງທີ່ເຮັດໃຫ້ໂປຣແກຣມປະຍຸກໃດໜຶ່ງ ສາມາດເຊື່ອມຕໍ່ກັບໂປຣແກຣມປະຍຸກ ຫຼື ລະບົບປະຕິບັດການອື່ນໄດ້;

7. **ພັບບລິກ ເອພີໄອ (Public API)** ໝາຍເຖິງ ຊ່ອງທາງການເຊື່ອມຕໍ່ທີ່ເປີດໃຫ້ນຳໃຊ້ໄດ້ແບບສາທາລະນະ ແລະ ມີການແບ່ງປັນກັບຜູ້ໃຫ້ບໍລິການອື່ນ;

8. **ປິດຕົວເອງ (Crash)** ໝາຍເຖິງ ການຢຸດເຮັດວຽກຂອງເຄື່ອງຄອມພິວເຕີ, ສະມາດໂຟນ ຫຼື ເຄືອຂ່າຍ ຊຶ່ງ ເກີດຈາກການຂັດຂ້ອງຂອງອຸປະກອນບາງສ່ວນ;

9. **ເພນເທັກ (Plain Text)** ໝາຍເຖິງ ຟາຍເນື້ອຫາທີ່ເປັນຂໍ້ຄວາມທຳມະດາ ຫຼື ຂໍ້ຄວາມປົກກະຕິທົ່ວໄປ ທີ່ບໍ່ມີການຈັດຮຸບແບບໃດໆ ເປັນຂໍ້ຄວາມທີ່ຄົນເຮົາສາມາດອ່ານອອກໄດ້;

10. **ທີເຟເອ Two Factors Authentication (TFA)** ໝາຍເຖິງ ການຢືນຢັນຕົວຕົນຜ່ານສອງຂັ້ນຕອນ ເປັນຂະບວນການຮັກສາຄວາມປອດໄພໃນການເຂົ້າລະບົບໃດໜຶ່ງ;

11. **ໂອທີພີ One-Time Password (OTP)** ໝາຍເຖິງ ຊຸດລະຫັດຜ່ານທີ່ໃຊ້ພຽງຄັ້ງດຽວທີ່ລະບົບສ້າງຂຶ້ນມາ ເພື່ອຄວາມປອດໄພໃນການເຮັດທຸລະກຳທາງອິນເຕີເນັດ ຊ່ວຍກວດສອບ ແລະ ຢືນຢັນຄວາມເປັນເຈົ້າຂອງບັນຊີໃດໜຶ່ງ;

12. **ລະບົບເຊີເວີ (Server System)** ໝາຍເຖິງ ລະບົບໃຫ້ບໍລິການຜ່ານລະບົບຄອມພິວເຕີ, ປະກອບດ້ວຍຖານຂໍ້ມູນເຊີເວີ (Database Server), ເວັບເຊີເວີ (Web Server), ເມວເຊີເວີ (Mail Server), ຟາຍເຊີເວີ (File Server) ແລະ ອື່ນໆ.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສ້າງ ແລະ ພັດທະນາແອັບພິເຄຊັ່ນຢູ່ ສປປ ລາວ.

ໝວດທີ 2
ການສ້າງ, ພັດທະນາ ແລະ ການທົດສອບແອັບພິເຄຊັ່ນໃຫ້ມີຄວາມປອດໄພ

ມາດຕາ 5 ການສ້າງ ແລະ ພັດທະນາ

ພາກລັດ ສົ່ງເສີມໃຫ້ມີການສ້າງ ແລະ ພັດທະນາແອັບພິເຄຊັ່ນໃຫ້ມີຄວາມປອດໄພ ໂດຍປະຕິບັດຕາມຫຼັກການ ດັ່ງນີ້:

1. ການພັດທະນາແອັບພິເຄຊັ່ນ ແລະ ເປີດຂໍ້ມູນ ເພື່ອພັດທະນາຕໍ່;
2. ການທົດສອບໜ້າທີ່ການເຮັດວຽກຂອງແອັບພິເຄຊັ່ນ;
3. ການໃຊ້ເຄື່ອງມື ແລະ ອົງປະກອບຕ່າງໆ;
4. ການຮັກສາຂໍ້ມູນສ່ວນບຸກຄົນໃນແອັບພິເຄຊັ່ນ;
5. ການຮັກສາຄວາມປອດໄພໃນແອັບພິເຄຊັ່ນ.

ມາດຕາ 6 ການກວດສອບຄວາມປອດໄພ

ການກວດສອບຄວາມປອດໄພຂອງແອັບພິເຄຊັ່ນ ຕ້ອງປະຕິບັດຕາມຫຼັກການກວດສອບຄວາມປອດໄພທີ່ໄດ້ມາດຕະຖານກໍ່ຄືການປະເມີນຄວາມສ່ຽງ, ລະບຸຊ່ອງໂຫວ່ທີ່ອາດຈະເກີດຂຶ້ນ, ການປ້ອງກັນ ແລະ ແນວທາງການແກ້ໄຂ ໂດຍໜ່ວຍງານຄຸ້ມຄອງຄວາມປອດໄພທີ່ກ່ຽວຂ້ອງ ແລະ/ຫຼື ກົມຄວາມປອດໄພໄຊເບີ.

ພາກລັດ ສົ່ງເສີມໃຫ້ຜູ້ສ້າງ ແລະ ພັດທະນາ ຫຼື ເຈົ້າຂອງແອັບພິເຄຊັ່ນນຳເອົາແອັບພິເຄຊັ່ນຂອງຕົນມາຜ່ານການກວດສອບຄວາມປອດໄພຕາມມາດຕະຖານນຳກົມຄວາມປອດໄພໄຊເບີ ເພື່ອຢັ້ງຢືນ ແລະ ຮັບປະກັນຄວາມປອດໄພ ທັງເປັນການສ້າງຄວາມໜ້າເຊື່ອຖືຂອງແອັບພິເຄຊັ່ນ ແລະ ການບໍລິການຂອງຕົນ.

ໝວດທີ 3
ການພັດທະນາແອັບພິເຄຊັ່ນ ແລະ ການເປີດຂໍ້ມູນເພື່ອພັດທະນາຕໍ່

ມາດຕາ 7 ລັກສະນະທົ່ວໄປ

ແອັບພິເຄຊັ່ນ ທີ່ມີການຕິດຕໍ່ກັບລະບົບແມ່ຂ່າຍ ຕ້ອງມີການພັດທະນາສ່ວນຂອງ API ທີ່ລະບົບເຊີເວີໃຫ້ເຮັດວຽກຄຽງຄູ່ກັນໄປໄດ້ສະເໝີ.

ແອັບພິເຄຊັ່ນ ທີ່ມີການຕິດຕໍ່ກັບລະບົບເຊີເວີທີ່ມີການຕິດຕໍ່ ເພື່ອຂໍຂໍ້ມູນ, ສົ່ງຂໍ້ມູນ ຫຼື ຂໍໃຫ້ລະບົບແມ່ຂ່າຍດຳເນີນການປະມວນຜົນ ຕ້ອງເຮັດວຽກຜ່ານ API ສະເໝີ.

API ທີ່ພັດທະນາຂຶ້ນ ຄວນຮັບ-ສົ່ງຂໍ້ມູນໂດຍໃຊ້ຮູບແບບ ແລະ ເຕັກໂນໂລຊີ ທີ່ໃຊ້ກັນຢ່າງກວ້າງຂວາງໃນລະຫວ່າງທີ່ມີການພັດທະນາ.

ມາດຕາ 8 ການເຂົ້າເຖິງ ແລະ ການສະແດງຂໍ້ມູນສາທາລະນະ

ແອັບພິເຄຊັ່ນ ທີ່ມີການສະແດງຂໍ້ມູນສາທາລະນະ ແລະ ຜູ້ໃຊ້ງານທົ່ວໄປສາມາດເຂົ້າເຖິງໄດ້ ຄວນຂໍຂໍ້ມູນດັ່ງກ່າວຈາກ Public API ຂອງໜ່ວຍງານ ຊຶ່ງ Public API ນີ້ ຄວນເປີດໃຫ້ນັກພັດທະນາໂປຣແກຣມທົ່ວໄປສາມາດເອີ້ນໃຊ້ງານໄດ້ ຊຶ່ງອາດຈະມີຂັ້ນຕອນການຂໍສິດໃນການເຂົ້າໃຊ້ງານ.

ໜ່ວຍງານຄວນພິຈາລະນາ Public API ເພື່ອໃຫ້ນັກພັດທະນາທົ່ວໄປ ສາມາດນຳຂໍ້ມູນສາທາລະນະ ທີ່ຖືກຕ້ອງ ແລະ ເຊື່ອຖືໄດ້ ຈາກໜ່ວຍງານໄປນຳໃຊ້ໂດຍກົງຢ່າງມີປະສິດຕິພາບ.

Public API ຄວນເຂົ້າເຖິງໄດ້ໂດຍງ່າຍມີຮູບແບບການຮັບ-ສົ່ງຂໍ້ມູນ ທີ່ໃຊ້ກັນຢ່າງກວ້າງຂວາງໃນລະຫວ່າງ ທີ່ມີການພັດທະນາ.

Public API ທີ່ເຂົ້າເຖິງຂໍ້ມູນໄດ້ທັນທີ ບໍ່ຄວນລະເມີດຄວາມເປັນສ່ວນຕົວຂອງຜູ້ໃຊ້ງານພາຍໃນລະບົບ ແລະ ບໍ່ຄວນເຂົ້າເຖິງຂໍ້ມູນສ່ວນຕົວຂອງຜູ້ໃຊ້ງານໄດ້.

Public API ຕ້ອງມີເອກະສານອ້າງອີງສຳລັບການພັດທະນາໂປຣແກຣມ ທີ່ລະບຸເຖິງຮູບແບບການຮັບ-ສົ່ງຂໍ້ມູນໂດຍລະອຽດ ເພື່ອໃຫ້ນັກພັດທະນາສາມາດນຳໄປໃຊ້ໄດ້ທັນທີ.

ມາດຕາ 9 ການເຂົ້າເຖິງຂໍ້ມູນສະເພາະຂອງ ຜູ້ໃຊ້ງານ, ແອັບພິເຄຊັ່ນ ແລະ/ຫຼື ຜູ້ພັດທະນາ

ແອັບພິເຄຊັ່ນ ທີ່ມີການເຂົ້າເຖິງຂໍ້ມູນສະເພາະຂອງຜູ້ໃຊ້ງານ, ແອັບພິເຄຊັ່ນ ແລະ/ຫຼື ຜູ້ພັດທະນາ ຄວນມີການອອກແບບໃຫ້ສາມາດລະບຸຜູ້ໃຊ້ງານ, ແອັບພິເຄຊັ່ນ ແລະ/ຫຼື ຜູ້ພັດທະນາໄດ້.

ການເຂົ້າເຖິງ API ດັ່ງກ່າວ ຄວນເປັນໄປຕາມມາດຕະຖານຄວາມປອດໄພຂອງຂໍ້ມູນ ຄວນຄຳນຶງເຖິງການເຂົ້າລະຫັດຂໍ້ມູນ, ການຄວບຄຸມສິດໃນການເຂົ້າເຖິງຂໍ້ມູນ ແລະ ຄວາມເປັນສ່ວນຕົວຂອງຜູ້ໃຊ້ງານຢ່າງເຄັ່ງຄັດ.

ມາດຕາ 10 ການປ່ຽນແປງ API

API ຄວນຮອງຮັບຫຼາຍຮຸ່ນ (API Versioning) ການປ່ຽນແປງ API ຄວນຄຳນຶງເຖິງແອັບພິເຄຊັ່ນ ທີ່ໃຊ້ງານ API ຢູ່ປັດຈຸບັນນັ້ນຈະຍັງສາມາດໃຊ້ງານໄດ້ຕໍ່ໄປ ໂດຍບໍ່ມີຜົນກະທົບ.

API ຄວນມີຊ່ອງທາງໃຫ້ນັກພັດທະນາລົງທະບຽນ ເພື່ອຮັບຂ່າວສານການປ່ຽນແປງ API ຕ່າງໆ.

ມາດຕາ 11 ການກຳນົດລະບຽບການໃນການໃຊ້ງານ API

ໃນກໍລະນີທີ່ມີການເປີດ Public API ຄວນມີເວັບໄຊທ໌ທີ່ສະແດງລະບຽບການ ແລະ ສິດໃນການໃຊ້ງານ API ຢ່າງຊັດເຈນ.

ລະບຽບການ ຄວນກວມເອົາສິດການໃຊ້ງານ ຫຼື ຮູບແບບຂອງແອັບພິເຄຊັ່ນທີ່ຫ້າມພັດທະນາ ຫຼື ສາມາດພັດທະນາໄດ້ລວມໄປເຖິງເລື່ອງທີ່ເຈົ້າຂອງຂໍ້ມູນປະຕິເສດ, ສະຫງວນສິດ ແລະ ເງື່ອນໄຂຕ່າງໆ ທີ່ນັກພັດທະນາ ຕ້ອງປະຕິບັດຕາມອີກດ້ວຍ.

ໝວດທີ 4
ການທົດສອບໜ້າທີ່ການເຮັດວຽກຂອງແອັບພິເຄຊັ່ນ

ມາດຕາ 12 ການທົດສອບ

ແອັບພິເຄຊັ່ນ ຕ້ອງໄດ້ຮັບການທົດສອບຢ່າງລະອຽດ ໂດຍການທົດສອບຕ້ອງກວມໄປເຖິງສະຖານະການຕ່າງໆ ທີ່ເກີດຂຶ້ນໄດ້ໃນການໃຊ້ງານຕົວຈິງ.

ແອັບພິເຄຊັ່ນ ຕ້ອງໄດ້ຮັບການທົດສອບວ່າບໍ່ປິດຕົວເອງ (Crash) ໃນສະຖານະການ ການໃຊ້ງານປົກກະຕິ.

ແອັບພິເຄຊັ່ນ ຄວນໄດ້ຮັບການທົດສອບເທິງອຸປະກອນແທ້ທີ່ມີລາຍລະອຽດໜ້າທີ່ການເຮັດວຽກຂອງອຸປະກອນ ໂດຍກວມເອົາກຸ່ມເປົ້າໝາຍຜູ້ໃຊ້ງານ.

ແອັບພິເຄຊັ່ນ ຄວນໄດ້ຮັບການທົດສອບເທິງທຸກລະບົບປະຕິບັດການ ທີ່ເປັນກຸ່ມເປົ້າໝາຍຂອງການນຳໄປໃຊ້ງານແທ້.

ແອັບພິເຄຊັ່ນ ຄວນທົດສອບກັບຂໍ້ມູນຈິງ ຫຼື ຂໍ້ມູນທີ່ຈຳລອງສະເໝືອນ ໃນປະລິມານຂໍ້ມູນທີ່ເໝາະສົມກັບການນຳໄປໃຊ້ງານ ເພື່ອໃຫ້ເຫັນສະພາບຂອງການໃຊ້ງານຕົວຈິງ.

ແອັບພິເຄຊັ່ນ ຄວນໄດ້ຮັບການທົດສອບສະຖານະການຈຳລອງຂໍ້ຜິດພາດ ໃນການໃຊ້ງານທີ່ອາດເກີດຂຶ້ນໄດ້ທັງໝົດ.

ມາດຕາ 13 ການທົດສອບສ່ວນການເຊື່ອມຕໍ່ກັບຜູ້ໃຊ້ງານ

ແອັບພິເຄຊັ່ນ ຕ້ອງໄດ້ຮັບການທົດສອບໃນສ່ວນຂອງ " ລັກສະນະທົ່ວໄປຂອງແອັບພິເຄຊັ່ນ ສ່ວນການເຊື່ອມຕໍ່ຜູ້ໃຊ້ງານ ແລະ ການໃຊ້ງານແອັບພິເຄຊັ່ນ " ທຸກລາຍການທີ່ກ່ຽວຂ້ອງ.

ແບບຟອມສຳລັບປ້ອນຂໍ້ມູນທຸກຈຸດ ຕ້ອງໄດ້ຮັບການທົດສອບຄວາມຖືກຕ້ອງຂອງຂໍ້ມູນທີ່ສາມາດໃສ່ໄດ້ ທັງປະເພດຂໍ້ມູນ, ຮູບແບບຂໍ້ມູນ, ຄວາມຖືກຕ້ອງຂອງຂໍ້ມູນ ແລະ ການນຳຂໍ້ມູນໄປໃຊ້ງານຕໍ່ຢ່າງຖືກຕ້ອງ.

ແອັບພິເຄຊັ່ນ ຄວນສະແດງຜົນຢ່າງຖືກຕ້ອງ ໃນກໍລະນີ ທີ່ລະບົບປະຕິບັດການສະແດງສະຖານະການເຮັດວຽກບາງຢ່າງແຊກເຂົ້າມາໃນບາງສ່ວນຂອງໜ້າຈໍ ເຊັ່ນ Internet Sharing/Tethering ຂອງລະບົບປະຕິບັດການ iOS ເປັນຕົ້ນ.

ແອັບພິເຄຊັ່ນ ຄວນໄດ້ຮັບການທົດສອບການຮອງຮັບການສຳຜັດສ່ວນຕ່າງໆ ຂອງໜ້າຈໍຢ່າງວ່ອງໄວໃນແຕ່ລະໜ້າຈໍ.

ມາດຕາ 14 ການທົດສອບການເຮັດວຽກຮ່ວມກັບລະບົບແຈ້ງເຕືອນ

ແອັບພິເຄຊັ່ນ ທີ່ມີການເຮັດວຽກຮ່ວມກັບລະບົບແຈ້ງເຕືອນ ຕ້ອງໄດ້ຮັບການທົດສອບ ໃນກໍລະນີ ມີຂໍ້ຄວາມເຕືອນຜູ້ໃຊ້ງານສາມາດຮຽກອ່ານຂໍ້ຄວາມຜ່ານການແຈ້ງເຕືອນໄດ້ ເມື່ອຜູ້ໃຊ້ງານກົດຂໍ້ຄວາມແຈ້ງເຕືອນຈະສາມາດ ເຂົ້າໃຊ້ງານແອັບພິເຄຊັ່ນໄດ້ ແລະ ມີການສະແດງໜ້າຈໍທີ່ເໝາະສົມສອດຄ່ອງກັບຂໍ້ຄວາມແຈ້ງເຕືອນທີ່ໄດ້ຮັບ.

ຄວນໄດ້ຮັບການທົດສອບສະຖານະຂອງແອັບພິເຄຊັ່ນ ທັງໃນສະຖານະທຳງານ (Active), ປິດຢູ່ແຕ່ຢູ່ໃນເບື້ອງຫຼັງ (Inactive, Background) ຫຼື ປິດຢູ່ຢ່າງສົມບູນ (Inactive, Closed) ເປັນຢ່າງນ້ອຍ.

ມາດຕາ 15 ການທົດສອບການເຮັດວຽກກັບລະບົບເຄືອຂ່າຍ

ແອັບພິເຄຊັ່ນ ຕ້ອງຖືກທົດສອບວ່າສາມາດໃຊ້ງານໄດ້ປົກກະຕິ ໃນຂະນະທີ່ລະບົບເຄືອຂ່າຍມີບັນຫາ ໂດຍສະແດງຂໍ້ຄວາມແຈ້ງຜູ້ໃຊ້ງານຢ່າງເໝາະສົມ.

ແອັບພິເຄຊັ່ນ ທີ່ມີການໃຊ້ງານເຄືອຂ່າຍ ຄວນມີການທົດສອບການເຮັດວຽກກັບເຄືອຂ່າຍທີ່ມີຄວາມໄວແຕກຕ່າງກັນ.

ມາດຕາ 16 ການທົດສອບການເຮັດວຽກກັບ API ແລະ/ຫຼື ລະບົບເຊີເວີ

ແອັບພິເຄຊັ່ນ ຕ້ອງໄດ້ຮັບການທົດສອບການເຮັດວຽກຮ່ວມກັບ API ທີ່ຈຳເປັນ ແລະ ຕ້ອງໄດ້ຮັບການທົດສອບວ່າສາມາດທຳງານໄດ້ໂດຍບໍ່ປິດຕົວເອງ ໃນກໍລະນີທີ່ API ເຮັດວຽກຜິດພາດ, ມີການປ່ຽນແປງຮຸ່ນ ຫຼື ສາເຫດອື່ນໆ ທີ່ສົ່ງຜົນໃຫ້ແອັບພິເຄຊັ່ນບໍ່ສາມາດໃຫ້ບໍລິການໄດ້ ໂດຍຕ້ອງມີຂໍ້ຄວາມແຈ້ງເຕືອນແກ່ຜູ້ໃຊ້ງານ.

ໝວດທີ 5
ການໃຊ້ເຄື່ອງມື ແລະ ອົງປະກອບຕ່າງໆ

ມາດຕາ 17 ການໃຊ້ເຄື່ອງມື ແລະ ອົງປະກອບຕ່າງໆຈາກພາຍນອກ

ຜູ້ສ້າງ ແລະ ພັດທະນາແອັບພິເຄຊັ່ນ ທີ່ມີການນຳໃຊ້ງານເຄື່ອງມືຕ່າງໆ ເຊັ່ນ ໂປຣແກຣມຈາກພາຍນອກ (3rd.Party Application Program), ສ່ວນການຕິດຕໍ່ ເພື່ອພັດທະນາຈາກພາຍນອກ (3rd.Party Application Program; API), ຊຸດພັດທະນາຊອບແວຈາກພາຍນອກ (3rd.Party Soflware Development Kit; SDK) ຕ້ອງໄດ້ຮັບອະນຸຍາດໃຫ້ໃຊ້ເຄື່ອງມືເຫຼົ່ານັ້ນ ໃນການພັດທະນາແອັບພິເຄຊັ່ນ ແລະ ສາມາດສະແດງສິດໃນການໃຊ້ງານເຄື່ອງມືດັ່ງກ່າວໄດ້.

ແອັບພິເຄຊັ່ນ ສາມາດມີອົງປະກອບຕ່າງໆ ຈາກພາຍນອກ ເຊັ່ນ ເພັງ, ຮູບພາບ, ຮູບກຣາຟຟິກ, ຕິວອັກສອນ ຕ້ອງໄດ້ຮັບອະນຸຍາດໃຫ້ໃຊ້ອົງປະກອບເຫຼົ່ານັ້ນ ໃນການພັດທະນາແອັບພິເຄຊັ່ນ ແລະ ສາມາດສະແດງສິດໃນການໃຊ້ງານດັ່ງກ່າວໄດ້.

ມາດຕາ 18 ການນຳໃຊ້ໂປຣແກຣມຕ່າງໆ

ການໃຊ້ງານໂປຣແກຣມຕ່າງໆ ຜູ້ສ້າງ ແລະ ພັດທະນາແອັບພິເຄຊັ່ນ ຕ້ອງກຳນົດສິດ ດັ່ງນີ້:

1. ສິດໃນການໃຊ້ງານໂປຣແກຣມທຸກຢ່າງ ທີ່ນຳມາໃຊ້ງານ ແລະ ມີຈຳນວນສິດພຽງພໍ ສຳລັບຈຳນວນຄົນໃນທີມພັດທະນາແອັບພິເຄຊັ່ນ;

2. ສິດໃນການໃຊ້ງານ ຕ້ອງກວມເອົາການນຳເອົາຜົນງານຈາກໂປຣແກຣມໄປໃຊ້ງານຕົວຈິງ ລວມໄປເຖິງການໃຊ້ເຣັດການຄ້າທີ່ບໍ່ໄດ້ເປັນພຽງສິດໃນການທົດລອງ, ນຳໃຊ້ສິດ ເພື່ອການສຶກສາ ຫຼື ສິດອື່ນໆ ທີ່ມັກຈະບໍ່ອະນຸຍາດໃຫ້ນຳຜົນງານໄປໃຊ້ໃນຈຸດປະສົງດັ່ງກ່າວ.

ມາດຕາ 19 ການນຳໃຊ້ ຮູບພາບ, ກຣາຟຟິກ, ເພງ ແລະ ອື່ນໆ

ຮູບພາບ ແລະ ສື່ທຸກຢ່າງທີ່ນຳມາໃຊ້ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງຮູບພາບ ຫຼື ຜູ້ຖືລິຂະສິດຢ່າງເປັນລາຍລັກອັກສອນ ຫຼື ໃຊ້ຮູບພາບ ແລະ ສື່ທີ່ມີລະບຽບການໃນການໃຊ້ງານ ທີ່ອະນຸຍາດໃຫ້ນຳໄປໃຊ້ໃນການພັດທະນາແອັບພິເຄຊັ່ນໄດ້.

ຫ້າມນຳຮູບພາບ ແລະ ສື່ຕ່າງໆ ມາໃຊ້ໂດຍບໍ່ໄດ້ຮັບອະນຸຍາດເດັດຂາດ ເຖິງວ່າຈະໃຫ້ເຄຼດິດຢ່າງຊັດເຈນພາຍໃນແອັບພິເຄຊັ່ນກໍ່ຕາມ.

ໃນກໍລະນີ ທີ່ເປັນຮູບພາບ ແລະ ສື່ທີ່ທາງຜູ້ພັດທະນາໂປຣແກຣມໄດ້ຮັບສິດມາກ່ອນ ໃນການພັດທະນາແອັບພິເຄຊັ່ນ ຫຼື ສ້າງສັນຜົນງານອື່ນ ຕ້ອງໄດ້ກວດສອບໃຫ້ແນ່ໃຈວ່າສາມາດໃຊ້ໃນການພັດທະນາແອັບພິເຄຊັ່ນໃໝ່ໄດ້.

ມາດຕາ 20 ການນຳໃຊ້ຕິວອັກສອນ

ຕິວອັກສອນທີ່ໃຊ້ ຕ້ອງໄດ້ຮັບອະນຸຍາດໃນການໃຊ້ງານໃນແອັບພິເຄຊັ່ນຈາກເຈົ້າຂອງຕິວອັນສອນ ຫຼື ຜູ້ຖືລິຂະສິດເປັນລາຍລັກອັກສອນ ຫຼື ໃຊ້ຕິວອັກສອນທີ່ມີລະບຽບການໃນການໃຊ້ງານ ທີ່ອະນຸຍາດໃຫ້ນຳໄປໃຊ້ໃນການພັດທະນາແອັບພິເຄຊັ່ນໄດ້.

ຕິວອັກສອນ ທີ່ຜູ້ພັດທະນາໄດ້ຮັບສິດໃນການໃຊ້ງານ ສຳລັບການສ້າງສັນອື່ນໆ ເຊັ່ນ: ສື່ສິ່ງພິມ ຈະຕ້ອງກວດສອບໃຫ້ແນ່ໃຈວ່າສາມາດນຳມາໃຊ້ງານໃນການພັດທະນາແອັບພິເຄຊັ່ນໄດ້.

ມາດຕາ 21 ການຕອບສະໜອງຂອງສ່ວນຮັບຂໍ້ມູນຈາກຜູ້ໃຊ້ງານ

ແອັບພິເຄຊັ່ນ ຕ້ອງກະກຽມການຮອງຮັບ ຫຼື ການກົດປຸ່ມ ແລະ ອົງປະກອບຄວບຄຸມຕ່າງໆ ເທິງໜ້າຈໍຢ່າງວ່ອງໄວ ແລະ ພ້ອມກັນ (Input Flooding) ເຊັ່ນ ກຽມປຸ່ມ Submit ບໍ່ໃຫ້ຜູ້ໃຊ້ງານສາມາດກົດຊໍ້າໄດ້ ເປັນຕົ້ນ.

ມາດຕາ 22 ການເຮັດວຽກຮ່ວມກັບ ແອັບພິເຄຊັ່ນພາຍນອກ

ໃນກໍລະນີ ແອັບພິເຄຊັ່ນ ຕ້ອງເຮັດວຽກຮ່ວມກັບແອັບພິເຄຊັ່ນອື່ນ ໃນລະບົບປະຕິບັດການ ແລະ ຍັງສົ່ງຜົນໃຫ້ມີການປ່ຽນຂ້າມໄປຫາແອັບພິເຄຊັ່ນອື່ນ ຈະຕ້ອງມີການຖາມຄວາມຕ້ອງການຂອງຜູ້ໃຊ້ງານກ່ອນ.

ມາດຕາ 23 ການເຂົ້າເວັບໄຊ, ຂໍ້ມູນທີ່ຢູ່ ແລະ ຕຳແໜ່ງສະຖານທີ່ຕັ້ງຕ່າງໆ

ການເຂົ້າເວັບໄຊຈາກພາຍໃນແອັບພິເຄຊັ່ນ ຕ້ອງມີການສະແດງທີ່ຢູ່ຂອງເວັບໄຊທີ່ໃຫ້ບໍລິການທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ແລະ ສາມາດອ້າງອີງແຫຼ່ງທີ່ມາໄດ້.

ແອັບພິເຄຊັ່ນ ຕ້ອງມີການສະແດງຂໍ້ມູນທີ່ຢູ່, ທີ່ຕັ້ງໜ່ວຍງານ ຫຼື ສະຖານທີ່ຕ່າງໆ, ອີເມວ ແລະ ເບີໂທລະສັບທີ່ສາມາດຕິດຕໍ່ກັບຜູ້ໃຊ້ບໍລິການໄດ້.

ມາດຕາ 24 ແບບຟອມການປະກອບຂໍ້ມູນ

ແອັບພິເຄຊັ່ນ ທີ່ມີການປະກອບແບບຟອມ ຕ້ອງປະຕິບັດ ດັ່ງນີ້:

1. ແບບຟອມປ້ອນຂໍ້ມູນ ຕ້ອງມີການສະແດງປ້າຍຊື່ຢ່າງຊັດເຈນ ແລະ ປ້າຍຊື່ນີ້ ຄວນຈະເຫັນຕະຫຼອດເວລາ;

2. ຂໍ້ມູນທີ່ຈຳກັດຮູບແບບ ຕ້ອງມີການກວດສອບຮູບແບບຂອງຂໍ້ມູນ ທີ່ຜູ້ໃຊ້ງານປ້ອນຂໍ້ມູນສະເໝີ;

3. ໃນຊ່ອງປ້ອນຂໍ້ມູນທີ່ມີການຈຳກັດຮູບແບບ ຕ້ອງມີການສະແດງແປ້ນພິມທີ່ເໝາະສົມ ເຊັ່ນ ຂໍ້ມູນ ທີ່ເປັນຕົວເລກເທົ່ານັ້ນ ຄວນສະແດງແປ້ນພິມທີ່ເປັນສະເພາະຕົວເລກ;

4. ຂໍ້ມູນລະຫັດຜ່ານ ຕ້ອງຖືກແທນທີ່ດ້ວຍເຄື່ອງໝາຍສັນຍາລັກພິເສດອື່ນ (ເຊັ່ນ *) ແລະ ຕ້ອງມີປຸ່ມສະແດງລະຫັດຜ່ານທີ່ສາມາດສະແດງລະຫັດຜ່ານ ທີ່ຖືກປົດບັງໄວ້ ເພື່ອໃຫ້ຜູ້ໃຊ້ງານເບິ່ງເຫັນ ແລະ ຢັ້ງຢືນໄດ້;

5. ຜູ້ໃຊ້ງານ ຕ້ອງບໍ່ສາມາດໃສ່ຂໍ້ມູນທີ່ເປັນໄປບໍ່ໄດ້ ເຊັ່ນ ບໍ່ສາມາດໃສ່ປີເກີດທີ່ເປັນປີໃນອະນາຄົດ;

6. ແບບຟອມການປ້ອນຂໍ້ມູນ ຄວນມີການໃຊ້ຮ່າງຂໍ້ມູນຕົວຢ່າງໃນບ່ອນດັ່ງກ່າວ ເພື່ອລະບຸຮູບແບບຂໍ້ມູນ ແລະ/ຫຼື ຕົວຢ່າງຂໍ້ມູນ;

7. ບໍ່ຄວນໃຊ້ຮ່າງຂໍ້ມູນຕົວຢ່າງໃນຫົວຂໍ້ຂອງຫ້ອງປ້ອນຂໍ້ມູນ ເພາະຮ່າງຂໍ້ມູນຕົວຢ່າງຈະຖືກແທນທີ່ດ້ວຍຂໍ້ມູນແທ້ ແລະ ເຮັດໃຫ້ບໍ່ຮູ້ວ່າຂໍ້ມູນນີ້ແມ່ນຂໍ້ມູນສຳລັບອັນໃດ;

8. ຖ້າຫາກຜູ້ໃຊ້ງານປິດໜ້າຈໍການປະກອບຂໍ້ມູນໃສ່ແບບຟອມ ແລະ ຂໍ້ມູນບໍ່ມີການບັນທຶກໄວ້ ສົ່ງຜົນໃຫ້ຜູ້ໃຊ້ງານຕ້ອງປ້ອນຂໍ້ມູນໃໝ່ ຄວນມີຂໍ້ຄວາມແຈ້ງເຕືອນສະແດງໃຫ້ຜູ້ໃຊ້ງານຮັບຊາບ ແລະ ຢັ້ງຢືນການປິດໜ້າຈໍສະເໝີ.

ມາດຕາ 25 ການລົງທະບຽນເຂົ້າສູ່ລະບົບເພື່ອນຳໃຊ້

ແອັບພິເຄຊັ່ນ ຕ້ອງການໃຫ້ຜູ້ໃຊ້ງານລົງທະບຽນເຂົ້າສູ່ລະບົບເພື່ອນຳໃຊ້ ຕ້ອງເຮັດແບບຟອມສຳລັບລົງທະບຽນ ໂດຍອ້າງອີງຈາກສ່ວນຂອງ "ແບບຟອມປ້ອນຂໍ້ມູນ" ເປັນຫຼັກ.

ການລົງທະບຽນເຂົ້າສູ່ລະບົບ ຕ້ອງມີລະບົບຊ່ວຍເຫຼືອ ໃນກໍລະນີ ຜູ້ໃຊ້ງານລືມລະຫັດຜ່ານຈາກໜ້າຈໍລົງທະບຽນ ສຳລັບວິທີການຊ່ວຍເຫຼືອ ອາດຈະໃຊ້ວິທີການຖາມຄຳຖາມລັບ ເພື່ອຕັ້ງລະຫັດຜ່ານໃໝ່ ຫຼື ສົ່ງລິ້ງສຳລັບຕັ້ງລະຫັດຜ່ານໃໝ່ໄປຫາອີເມວ ທີ່ໃຫ້ໄວ້ ຫຼື ວິທີການອື່ນໆ.

ມາດຕາ 26 ການເຮັດວຽກໃນຮູບແບບເບື້ອງຫຼັງ (Background Process)

ແອັບພິເຄຊັ່ນ ຄວນມີການຈັດການການເຮັດວຽກທີ່ຄ້າງຢູ່ ກ່ອນເຂົ້າສູ່ແບບເບື້ອງຫຼັງຢ່າງເໝາະສົມ ເຊັ່ນ: ຢຸດການດາວໂຫຼດຂໍ້ມູນໄວ້ຊົ່ວຄາວ, ຢຸດການເຮັດວຽກບາງຢ່າງທີ່ຄ້າງຢູ່ ບັນທຶກຂໍ້ມູນທີ່ຈຳເປັນຕ້ອງໃຊ້ເມື່ອກັບເຂົ້າສູ່ຮູບແບບການເຮັດວຽກປົກກະຕິ, ຢຸດຫຼິ້ນວີດີໂອ ແລະ/ຫຼື ສຽງ ນອກຈາກເປັນຄຸນສົມບັດການເຮັດວຽກຫຼັກ ແລະ ເປັນຄວາມຕ້ອງການຂອງຜູ້ໃຊ້ງານ ຄວນໃຫ້ມີຕົວເລືອກທີ່ສາມາດຕັ້ງຄ່າໄດ້ຢ່າງຊັດເຈນ.

ເມື່ອກັບເຂົ້າສູ່ຮູບແບບການເຮັດວຽກປົກກະຕິ ແອັບພິເຄຊັ່ນ ຄວນເຮັດວຽກຢ່າງຕໍ່ເນື່ອງຈາກສະຖານະກ່ອນທີ່ຈະເຂົ້າສູ່ຮູບແບບການທຳງານເບື້ອງຫຼັງ.

ແອັບພິເຄຊັ່ນ ທີ່ມີການເຮັດວຽກໃນຮູບແບບເບື້ອງຫຼັງ ຄວນມີການເຮັດວຽກສະເພາະເທົ່າທີ່ຈຳເປັນຕໍ່ຄຸນສົມບັດການເຮັດວຽກຫຼັກຕໍ່ຜູ້ໃຊ້ງານ ເທົ່ານັ້ນ.

ແອັບພິເຄຊັ່ນ ບໍ່ຄວນເກັບຂໍ້ມູນທີ່ລະເມີດຄວາມເປັນສ່ວນຕົວຂອງຜູ້ໃຊ້ງານໃນທຸກກໍລະນີ ໂດຍສະເພາະໃນກໍລະນີ ທີ່ບໍ່ກ່ຽວຂ້ອງກັບຄຸນສົມບັດການເຮັດວຽກຫຼັກ.

ມາດຕາ 27 ການນຳໃຊ້ API ແລະ SDK ຈາກພາຍນອກ

ແອັບພິເຄຊັ່ນ ທີ່ມີການພັດທະນາໂດຍການນຳໃຊ້ສ່ວນການເຊື່ອມຕໍ່ ເພື່ອພັດທະນາໂປຣແກຣມ API ຫຼື ຊຸດພັດທະນາຊອບແວ SDK ຈາກພາຍນອກເຂົ້າມາໃຊ້ງານ ຕ້ອງພິຈາລະນາເງື່ອນໄຂໃນການໃຊ້ງານ API ແລະ SDK ຕ່າງໆ ໃຫ້ລະອຽດ.

ເງື່ອນໄຂການໃຊ້ງານ API ແລະ SDK ທີ່ນຳມາໃຊ້ງານ ຕ້ອງບໍ່ລະເມີດ ຫຼື ຂັດຕໍ່ຄວາມເປັນເຈົ້າຂອງລິຂະສິດການໃຊ້ງານການເປີດລະຫັດຊອບແວ ຫຼື ສ່ວນຂອງຊອບແວ ຕາມທີ່ລະບຸໄວ້ໃນສັນຍາການພັດທະນາແອັບພິເຄຊັ່ນ.

ເງື່ອນໄຂການໃຊ້ງານ API ແລະ SDK ທີ່ນຳມາໃຊ້ງານທັງໝົດ ຕ້ອງມີຄວາມສອດຂ້ອງກັນບໍ່ຂັດແຍ່ງກັນ.

ຜູ້ພັດທະນາ ຕ້ອງສະແດງລາຍການຂອງ API ແລະ SDK ທີ່ນຳມາໃຊ້ງານທັງໝົດ ແລະ ສະແດງລະບຽບການ ໃນການໃຊ້ງານສະເໝີ.

ຜູ້ພັດທະນາ ຕ້ອງເຮັດຕາມລະບຽບການ ການໃຊ້ງານຂອງ API ແລະ SDK ທີ່ນຳມາໃຊ້ຢ່າງເຂັ້ມງວດ.

ໝວດທີ 6
ການຮັກສາຂໍ້ມູນສ່ວນບຸກຄົນໃນແອັບພິເຄຊັ່ນ

ມາດຕາ 28 ການຮັກສາຂໍ້ມູນສ່ວນບຸກຄົນ

ການເກັບຂໍ້ມູນຕ່າງໆ ທີ່ກ່ຽວຂ້ອງກັບຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ຕ້ອງປະຕິບັດຕາມຄວາມເຫັນດີຂອງຜູ້ໃຊ້ງານເທົ່ານັ້ນ.

ການເກັບຂໍ້ມູນຕ່າງໆ ທີ່ກ່ຽວຂ້ອງກັບຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ຕ້ອງເປັນຂໍ້ມູນທີ່ກ່ຽວຂ້ອງກັບການເຮັດວຽກ ແລະ ໃຊ້ງານແອັບພິເຄຊັ່ນ ໂດຍກົງເທົ່ານັ້ນ.

ຂໍ້ມູນທີ່ກ່ຽວຂ້ອງກັບຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ຕ້ອງບໍ່ຖືກເປີດເຜີຍ ນອກຈາກກໍລະນີ ທີ່ຈຳເປັນຕໍ່ການໃຊ້ງານແອັບພິເຄຊັ່ນໂດຍກົງ ແລະ ເປີດເຜີຍຂໍ້ມູນເປັນເວລາຊົ່ວຄາວຕໍ່ຜູ້ກ່ຽວຂ້ອງເທົ່ານັ້ນ.

ເນື້ອໃນ ຫຼື ຂໍ້ມູນ ທີ່ສະແດງໃນແອັບພິເຄຊັ່ນ ຕ້ອງບໍ່ລະເມີດກົດໝາຍທີ່ກ່ຽວຂ້ອງກັບຄວາມເປັນສ່ວນຕົວຂອງບຸກຄົນ ໂດຍອີງຕາມກົດໝາຍທີ່ກ່ຽວຂ້ອງທັງໝົດ.

ມາດຕາ 29 ສິດຂອງຜູ້ໃຊ້ງານໃນການເປັນສ່ວນຕົວຂອງຜູ້ໃຊ້ງານ ແລະ ເງື່ອນໄຂການນຳໃຊ້

ຜູ້ໃຊ້ງານ ຕ້ອງສາມາດເຂົ້າເຖິງໜ້າຈໍ ເພື່ອສະແດງສິດໃນການໃຊ້ງານ, ຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ແລະ ເງື່ອນໄຂໃນການນຳໃຊ້ ດ້ວຍຄວາມສະດວກຈາກພາຍໃນແອັບພິເຄຊັ່ນ.

ແອັບພິເຄຊັ່ນ ທີ່ມີການເກັບຂໍ້ມູນສ່ວນຕົວຂອງຜູ້ໃຊ້ງານ ຕ້ອງລະບຸໃນໜ້າຈໍສະແດງສິດ ແລະ ຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ໃຫ້ຜູ້ໃຊ້ງານຮັບຊາບຢ່າງຊັດເຈນວ່າມີການເກັບຂໍ້ມູນຫຍັງແນ່.

ຜູ້ໃຊ້ງານ ຕ້ອງສາມາດລຶບ ຫຼື ແກ້ໄຂຂໍ້ມູນສ່ວນຕົວທີ່ບໍ່ຖືກຕ້ອງ, ບໍ່ສົມບູນ ຫຼື ບໍ່ເປັນປະຈຸບັນໄດ້ ຖ້າຫາກມີການປ່ຽນແປງສິດຂອງຜູ້ໃຊ້ງານ, ຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ຫຼື ເງື່ອນໄຂການນຳໃຊ້ ຕ້ອງມີການແຈ້ງໃຫ້ຜູ້ໃຊ້ງານຮັບຊາບ ຢ່າງຊັດເຈນສະເໝີ.

ຖ້າຫາກແອັບພິເຄຊັ່ນ ໃຫ້ຜູ້ໃຊ້ງານຍອມຮັບໃນສິດຂອງຜູ້ໃຊ້ງານ ຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ຫຼື ເງື່ອນໄຂການນຳໃຊ້ ໃນການລົງທະບຽນເຂົ້າໃຊ້ງານເທື່ອທຳອິດ ແລະ ພາຍຫຼັງມີການປ່ຽນແປງເງື່ອນໄຂດັ່ງກ່າວ ຕ້ອງມີການສະແດງໜ້າຈໍໃຫ້ຜູ້ໃຊ້ງານຍອມຮັບສິດ ທີ່ມີການປ່ຽນແປງທຸກຄັ້ງ.

ແອັບພິເຄຊັ່ນ ຕ້ອງມີຊ່ອງທາງໃຫ້ຕິດຕໍ່ຜູ້ກ່ຽວຂ້ອງ ເພື່ອສອບຖາມຂໍ້ມູນ ຫຼື ກວດສອບສິດ ແລະ ການໃຊ້ຂໍ້ມູນທີ່ກ່ຽວຂ້ອງກັບຄວາມເປັນສ່ວນຕົວຂອງຜູ້ໃຊ້ງານໄດ້.

ມາດຕາ 30 ການເກັບຮັກສາຂໍ້ມູນຊົ່ວຄາວໃນອຸປະກອນຂອງຜູ້ໃຊ້

ແອັບພິເຄຊັ່ນ ຕ້ອງບໍ່ມີການເກັບຂໍ້ມູນໃດໜຶ່ງຂອງຜູ້ໃຊ້ງານທີ່ບໍ່ກ່ຽວຂ້ອງກັບການເຮັດວຽກໂດຍກົງຂອງແອັບພິເຄຊັ່ນ ເຖິງວ່າຈະເປັນຂໍ້ມູນຊົ່ວຄາວກໍ່ຕາມ.

ແອັບພິເຄຊັ່ນ ອາດເກັບຂໍ້ມູນໄວ້ໃນອຸປະກອນຂອງຜູ້ໃຊ້ງານຊົ່ວຄາວ ຄວນມີຈຸດປະສົງເພື່ມປະສິດທິພາບການເຮັດວຽກຂອງແອັບພິເຄຊັ່ນ ແລະ ຫຼຸດການຕິດຕໍ່ກັບລະບົບແມ່ຂ່າຍ ເທົ່ານັ້ນ.

ເມື່ອເຂົ້າສູ່ຮູບແບບການເຮັດວຽກເບື້ອງຫຼັງ ແອັບພິເຄຊັ່ນ ຄວນມີການບັນທຶກຂໍ້ມູນຊົ່ວຄາວ ທີ່ຈຳເປັນໃນການເຮັດວຽກຕໍ່ ເມື່ອກັບຄືນສູ່ຮູບແບບການເຮັດວຽກປົກກະຕິ.

ແອັບພິເຄຊັ່ນ ທີ່ຮອງຮັບການລົງທະບຽນເຂົ້າໃຊ້ງານ ແລະ ມີການເກັບຂໍ້ມູນເນື້ອຫາໄວ້ເປັນຂໍ້ມູນຊົ່ວຄາວ ຕ້ອງລະມັດລະວັງບໍ່ໃຫ້ຂໍ້ມູນຊົ່ວຄາວ ທີ່ເກັບໄວ້ຂອງຜູ້ໃຊ້ງານແຕ່ລະຄົນສະແດງໃຫ້ຜູ້ໃຊ້ງານອື່ນໆ ໃນເຄື່ອງດຽວກັນເຫັນ, ຄວນໃຊ້ວິທີການແຍກເກັບຂໍ້ມູນຊົ່ວຄາວເປັນແຕ່ລະບຸກຄົນ ຫຼື ລຶບຂໍ້ມູນຊົ່ວຄາວ ເມື່ອມີການອອກຈາກລະບົບ ຫຼື ວິທີການອື່ນທີ່ໃຫ້ຜົນຮັບຖືກຕ້ອງ.

ແອັບພິເຄຊັ່ນ ຈະບໍ່ມີການເກັບຂໍ້ມູນທີ່ອາດເປັນອັນຕະລາຍຕໍ່ຄວາມປອດໄພຂອງຜູ້ໃຊ້ງານ ທີ່ເປັນຂໍ້ມູນຊົ່ວຄາວ ໂດຍບໍ່ມີການເຂົ້າລະຫັດ.

ມາດຕາ 31 ການເກັບຂໍ້ມູນຖາວອນໃນອຸປະກອນຂອງຜູ້ໃຊ້

ແອັບພິເຄຊັ່ນ ອາດມີການເກັບຂໍ້ມູນບາງຢ່າງໃນລັກສະນະຂໍ້ມູນຖາວອນ ຊຶ່ງໃຫ້ພິຈາລະນາເຖິງຄວາມຈຳເປັນ ແລະ ປະເພດຂໍ້ມູນໃນການຈັດເກັບ.

ມາດຕາ 32 ການນຳໃຊ້ເຄື່ອງມືໃນການພັດທະນາຊອບແວຂອງພາກສ່ວນອື່ນ

ແອັບພິເຄຊັ່ນ ທີ່ມີການພັດທະນາໂດຍນຳໃຊ້ຊຸດເຄື່ອງມືໃນການພັດທະນາຊອບແວຂອງພາກສ່ວນອື່ນ ຕ້ອງບໍ່ຂັດກັບນະໂຍບາຍ ທີ່ກ່ຽວຂ້ອງກັບການເກັບຂໍ້ມູນຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ໃນແຕ່ລະພລັດຟອມ (Platform) ແລະ ຂອງ SDK ນັ້ນ.

ໃນກໍລະນີທີ່ SDK ທີ່ນຳມາໃຊ້ມີການເກັບຂໍ້ມູນຂອງຜູ້ໃຊ້ງານ ແລະ ສົ່ງໄປຫາເຊີເວີຜູ້ພັດທະນາ ຕ້ອງແນ່ໃຈວ່າ SDK ນັ້ນບໍ່ມີການເກັບຂໍ້ມູນທີ່ລະເມີດຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ແລະ ຕ້ອງມີການແຈ້ງໃຫ້ຜູ້ໃຊ້ງານຮັບຊາບເຖິງການເກັບ ແລະ ການໃຊ້ຂໍ້ມູນດັ່ງກ່າວສະເໝີ.

ໝວດທີ 7
ການຮັກສາຄວາມປອດໄພໃນແອັບພິເຄຊັ່ນ

ມາດຕາ 33 ການຈັດການກັບຂໍ້ມູນທີ່ສຳຄັນ

ຂໍ້ມູນທີ່ເປັນຂໍ້ມູນສຳຄັນ ຕ້ອງໄດ້ມີການເຂົ້າລະຫັດຕະຫຼອດ ເຖິງຈະເປັນການເກັບໄວ້ຊົ່ວຄາວໃນຄອມພິວເຕີຂອງຜູ້ໃຊ້ງານໃນລະບົບແມ່ຂ່າຍ ແລະ ການສົ່ງຂໍ້ມູນຜ່ານລະບົບເຄືອຂ່າຍທັງໝົດ ເຊັ່ນ ຂໍ້ມູນສ່ວນຕົວຜູ້ໃຊ້ງານ, ຂໍ້ມູນກ່ຽວກັບບັນຊີທະນາຄານ, ບັດເຄຼດິດ ເປັນຕົ້ນ.

ເມື່ອມີການປິດແອັບພິເຄຊັ່ນ ຕ້ອງມີການພິຈາລະນາບໍ່ໃຫ້ເຂົ້າເຖິງຂໍ້ມູນທີ່ສຳຄັນ ໂດຍບໍ່ໃສ່ລະຫັດຜ່ານເພື່ອຢືນຢັນຕົວຕົນອີກຄັ້ງ ເຖິງແມ່ນວ່າຜູ້ໃຊ້ງານຈະຍັງເຂົ້າລະບົບຄ້າງໄວ້ຢູ່ກໍ່ຕາມ.

ການສະແດງຜົນ ຕ້ອງມີການແທນຂໍ້ມູນແທ້ດ້ວຍເຄື່ອງໝາຍ (*) ສະເໝີ ຫຼື ໃນກໍລະນີ ທີ່ເປັນຂໍ້ມູນທີ່ຕ້ອງການໃຫ້ຜູ້ໃຊ້ງານເຫັນບາງສ່ວນ ກໍໃຫ້ແທນດ້ວຍເຄື່ອງໝາຍ (*) ຢ່າງໜ້ອຍ 25 ສ່ວນຮ້ອຍຂອງຂໍ້ມູນທັງໝົດ.

ມາດຕາ 34 ມາດຕະການຮອງຮັບສຳລັບຄວາມປອດໄພເມື່ອອຸປະກອນສູນຫາຍ

ໃນກໍລະນີ ທີ່ລະບົບຮອງຮັບການເຂົ້າໃຊ້ໄດ້ຫຼາຍກວ່າໜຶ່ງຄົນ ຫຼື ຫຼາຍກວ່າໜຶ່ງອຸປະກອນພ້ອມກັນ ຕ້ອງຮອງຮັບການສັ່ງໃຫ້ອອກຈາກລະບົບພ້ອມກັນທຸກອຸປະກອນ ລວມເຖິງການລຶບຂໍ້ມູນຄວາມເປັນສ່ວນຕົວ ແລະ ຂໍ້ມູນຊົ່ວຄາວທັງໝົດຂອງຜູ້ໃຊ້ງານ ອອກຈາກເຄື່ອງອຸປະກອນ.

ມາດຕາ 35 ການເຊື່ອມຕໍ່ກັບລະບົບແມ່ຂ່າຍ

ການສົ່ງຂໍ້ມູນທີ່ເປັນຂໍ້ມູນສ່ວນຕົວຂອງຜູ້ໃຊ້ງານ, ຂໍ້ມູນທີ່ສຳຄັນລະຫວ່າງແອັບພິເຄຊັ່ນ ແລະ ລະບົບແມ່ຂ່າຍ ຕ້ອງມີການເຂົ້າລະຫັດສະເໝີບໍ່ສາມາດສົ່ງເປັນຂໍ້ຄວາມທຳມະດາ (Plain Text) ໄດ້ ແລະ ຕ້ອງສົ່ງຜ່ານຊ່ອງທາງທີ່ມີຄວາມປອດໄພ ເຊັ່ນ SSL/TSL.

ການເຂົ້າເຖິງຂໍ້ມູນ ທີ່ເປັນສ່ວນຕົວຂອງຜູ້ໃຊ້ງານທີ່ເກັບຂໍ້ມູນໄວ້ໃນລະບົບແມ່ຂ່າຍ ຕ້ອງຮັບຮອງວ່າເປັນຜູ້ທີ່ໄດ້ຮັບອະນຸຍາດໃນການເຂົ້າເຖິງເທົ່ານັ້ນ ແລະ ຕ້ອງພິຈາລະນາຂໍ້ມູນສາທາລະນະ ຫຼື ການຕອບສະໜອງຈາກ Public API ທີ່ສາມາດເຂົ້າເຖິງໄດ້ຈາກພາຍນອກແອັບພິເຄຊັ່ນ ໂດຍບໍ່ມີຂໍ້ມູນຄວາມເປັນສ່ວນຕົວຂອງຜູ້ໃຊ້ງານ ແລະ ເຂົ້າເຖິງໄດ້ໂດຍບໍ່ຕ້ອງເຂົ້າລະບົບ ຈຶ່ງຈະສາມາດສົ່ງເປັນ Plain Text ທີ່ບໍ່ຕ້ອງເຂົ້າລະຫັດໄດ້.

ມາດຕາ 36 ການລະບຸຕົວຕົນຜູ້ໃຊ້ງານ

ແອັບພິເຄຊັ່ນ ຄວນຮອງຮັບການລະບຸຕົວຕົນຜູ້ໃຊ້ງານດ້ວຍເຕັກໂນໂລຊີລະບຸຕົວຕົນແບບໃໝ່ ເຊັ່ນ OAuth 2.0 ແທນການສົ່ງຂໍ້ມູນການເຂົ້າໃຊ້ລະບົບ (ຊື່ບັນຊີຜູ້ໃຊ້ງານ ແລະ ລະຫັດຜ່ານ), ຄວນພິຈາລະນາການລະບຸຕົວຕົນໂດຍໃຊ້ອົງປະກອບ ຫຼື ປັດໄຈຢ່າງໜ້ອຍ 02 ຢ່າງ (02 Factors Authenication) ຫຼື ຫຼາຍກວ່ານັ້ນ ເຊັ່ນ ການເຮັດວຽກຮ່ວມກັນກັບລະບົບ One-Time Password (OTP) ໄປຫາໝາຍເລກໂທລະສັບທີ່ໄດ້ລະບຸໄວ້ເປັນຕົ້ນ.

ຖ້າຫາກຈຳເປັນຕ້ອງສົ່ງຊື່ຜູ້ໃຊ້ງານ ແລະ ລະຫັດຜ່ານ ໃຫ້ຈັດການຕາມວິທີການຈັດເກັບຂໍ້ມູນທີ່ເປັນຂໍ້ມູນທີ່ສຳຄັນ.

ໝວດທີ 8
ສິດ ແລະ ພັນທະ

ມາດຕາ 37 ສິດ ແລະ ພັນທະຂອງຜູ້ໃຫ້ບໍລິການ

ຜູ້ໃຫ້ບໍລິການຮັບຝາກເວັບໄຊບໍລິການ API ມີສິດ ແລະ ພັນທະ ດັ່ງນີ້:

1. ໃຫ້ຄຳແນະນຳ ແລະ ຄຳປຶກສາໃນການພັດທະນາແອັບພິເຄຊັ່ນ;

2. ປະສານສົມທົບ, ຮ່ວມມືກັບຜູ້ໃຊ້ບໍລິການທາງດ້ານວິຊາການ ແລະ ເຕົ້ານຶກໃນການຄົ້ນຄວ້າ ແລະ ພັດທະນາແອັບພິເຄຊັ່ນ;

3. ຄຸ້ມຄອງ, ໃຫ້ບໍລິການຮັບຝາກເວັບໄຊບໍລິການ API ແລະ ໃຫ້ບໍລິການພື້ນທີ່ໃຫ້ບໍລິການຮັບຝາກເວັບໄຊບໍລິການ API;

4. ຮັບປະກັນຄຸນນະພາບ ແລະ ມາດຕະຖານຂອງລະບົບເຊີເວີ, ໂປຣແກຣມ ແລະ ລະບົບເຄືອຂ່າຍ ກ່ອນຈະມີການໃຫ້ບໍລິການຮັບຝາກເວັບໄຊບໍລິການ API ໃນແຕ່ລະຄັ້ງ ເພື່ອຮັບປະກັນຄວາມປອດໄພ;

5. ຄຸ້ມຄອງ, ເກັບຮັກສາຂໍ້ມູນ ແລະ ຖານຂໍ້ມູນແອັບພິເຄຊັ່ນ;

6. ໂຈະ ຫຼື ລະງັບການໃຫ້ບໍລິການຮັບຝາກເວັບໄຊບໍລິການ API ທີ່ເປັນອັນຕະລາຍຕໍ່ສັງຄົມ ຫຼື ຜິດຕໍ່ກົດໝາຍ ແລະ ລະບຽບການ;

7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 38 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ມີສິດ ແລະ ພັນທະ ດັ່ງນີ້:

1. ຕ້ອງປະກອບຂໍ້ມູນໃນການລົງທະບຽນປະເພດການບໍລິການ ແລະ ຂໍ້ມູນຕິດຕໍ່ພົວພັນລະອຽດ;

2. ຕ້ອງປະຕິບັດຕາມວັດຖຸປະສົງທີ່ໄດ້ຮັບອະນຸຍາດ ຕາມລະບຽບການຂອງຜູ້ໃຫ້ບໍລິການຮັບຝາກເວັບໄຊບໍລິການ API ແລະ ບໍ່ຂັດຕໍ່ກົດໝາຍ ແລະ ລະບຽບການທີ່ວາງອອກໃນແຕ່ລະໄລຍະ;

3. ຕ້ອງເກັບຮັກສາ ແລະ ນຳໃຊ້ລະຫັດຊື່ພ້ອມທັງລະຫັດຜ່ານຂອງຕົນໃຫ້ປອດໄພ ແລະ ປົດລັບ;

4. ຕ້ອງເປັນຜູ້ຮັບຜິດຊອບທັງໝົດ ຕໍ່ຄວາມເສຍຫາຍອັນເກີດຈາກການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ຈ່າຍຄ່າທຳນຽມຝາກເວັບໄຊບໍລິການ API ຕາມທີ່ໄດ້ກຳນົດໄວ້ໃນ ນິຕິກຳທີ່ກ່ຽວຂ້ອງ;

6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ໝວດທີ 9
ການຄຸ້ມຄອງ

ມາດຕາ 39 ອົງການຄຸ້ມຄອງວຽກງານການສ້າງ ແລະ ພັດທະນາແອັບພິເຄຊັ່ນໃຫ້ມີຄວາມປອດໄພ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄຸ້ມຄອງວຽກງານການສ້າງ ແລະ ພັດທະນາແອັບພິເຄຊັ່ນ ໃຫ້ມີຄວາມປອດໄພ ຢ່າງລວມສຸນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມຄວາມປອດໄພ ໄຊເບີ ແລະ ພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ 40 ສິດ ແລະ ໜ້າທີ່ຂອງກົມຄວາມປອດໄພໄຊເບີ

ໃນການຄຸ້ມຄອງວຽກງານການສ້າງ ແລະ ພັດທະນາແອັບພິເຄຊັ່ນ ໃຫ້ມີຄວາມປອດໄພ ກົມຄວາມປອດໄພໄຊເບີ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຫຼັກການ, ລະບຽບການ ແລະ ມາດຕະຖານ ໃນການຄຸ້ມຄອງ, ຕິດຕາມ-ກວດກາ ການພັດທະນາແອັບພິເຄຊັ່ນ;
2. ໂຄສະນາ, ເຜີຍແຜ່ມາດຕະຖານ ແລະ ແອັບພິເຄຊັ່ນໃນການຈັດຕັ້ງປະຕິບັດ;
3. ໃຫ້ຄຳແນະນຳ, ກວດກາ ແລະ ຕິດຕາມການພັດທະນາແອັບພິເຄຊັ່ນ;
4. ແຈ້ງເຕືອນອົງການຈັດຕັ້ງລັດທີ່ນຳໃຊ້ ແລະ ໃຫ້ບໍລິການຂໍ້ມູນຂ່າວສານຜ່ານແອັບພິເຄຊັ່ນ ທີ່ບໍ່ຖືກຕ້ອງ ແລະ ບໍ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ບໍ່ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ລະບຽບການຕ່າງໆ ກ່ຽວກັບການພັດທະນາແອັບພິເຄຊັ່ນ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

ມາດຕາ 41 ສິດ ແລະ ໜ້າທີ່ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ

ໃນການຄຸ້ມຄອງວຽກງານການສ້າງ ແລະ ພັດທະນາແອັບພິເຄຊັ່ນໃຫ້ມີຄວາມປອດໄພ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນການ ແລະ ຂໍ້ຕົກລົງຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກ່ຽວກັບວຽກງານການສ້າງ ແລະ ພັດທະນາແອັບພິເຄຊັ່ນໃຫ້ມີຄວາມປອດໄພ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດ;
2. ໂຄສະນາ, ເຜີຍແຜ່ມາດຕະຖານ ແອັບພິເຄຊັ່ນຢູ່ພາຍໃນທ້ອງຖິ່ນຂອງຕົນໃຫ້ທົ່ວເຖິງ;
3. ຊີ້ນຳຫ້ອງການເຕັກໂນໂລຊີ ແລະ ການສື່ສານ ປະຈຳເມືອງ, ເທດສະບານ ກ່ຽວກັບວຽກງານການສ້າງ ແລະ ພັດທະນາແອັບພິເຄຊັ່ນໃຫ້ມີຄວາມປອດໄພ;
4. ໃຫ້ຄຳແນະນຳ, ກວດກາ ແລະ ຕິດຕາມການພັດທະນາແອັບພິເຄຊັ່ນໃນຂອບເຂດທ້ອງຖິ່ນຂອງຕົນ;
5. ປະສານສົມທົບ ແລະ ຮ່ວມມື ກັບອົງການປົກຄອງແຂວງ, ນະຄອນ ແລະ ເມືອງ ທາງດ້ານວິຊາການ ແລະ ເຕັກນິກໃນການຄົ້ນຄວ້າ ແລະ ພັດທະນາແອັບພິເຄຊັ່ນ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

ໝວດທີ 10
ບົດບັນຍັດສຸດທ້າຍ

ມາດຕາ 42 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມຄວາມປອດໄພໄຊເບີ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 43 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງສິ່ສິບຫ້າວັນ ນັບແຕ່ວັນທີ່ໄດ້ລົງລາຍເຊັນປະກາດໃຊ້ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ບໍ່ວົງຄຳ ວິງດາລາ